# ກົດໝາຍຂອງລັດວໍຊິງຕັນກ່ຽວກັບ ການທາລຸນ ແລະ ການລະເລີຍຕໍ່ເດັກ



ເອກະສານນີ້ ມີຈຸດປະສົງເພື່ອໃຫ້ການສຶກສາກ່ຽວກັບກົດໝາຍຂອງລັດວໍຊິງຕັນທີ່ສຳຄັນກ່ຽວກັບການທາລຸນ ແລະ ການລະເລີຍຕໍ່ເດັກ ແລະ ອີງຕາມ Revised Code of Washington (ປະມວນກົດໝາຍຂອງລັດວໍຊິງຕັນສະບັບປັບປຸງ; RCW) ສະບັບປັບປຸງ ແລະ Washington Administrative Code (ປະມວນກົດໝາຍປົກຄອງຂອງລັດວໍຊິງຕັນ; WAC).

## ລະບຽບວິໄນດ້ານຮ່າງກາຍດີແລ້ວບໍ?

ແມ່ນແລ້ວ, ລະບຽບວິໄນດ້ານຮ່າງກາຍຂອງເດັກ, ລວມທັງການນຳໃຊ້ທີ່ສົມເຫດສົມຜົນ ຫຼື ການລົງໂທດທາງກາຍ ຈະບໍ່ຖືວ່າເປັນການທາລຸນ ຫຼື ຜິດກົດໝາຍ ເມື່ອມີຄວາມສົມເຫດສົມຜົນ ແລະ ບໍ່ໜັກໜ່ວງຫຼາຍ ແລະ ຖືກລົງໂທດໂດຍພໍ່ແມ່, ຄູອາຈານ ຫຼື ຜູ້ປົກຄອງ ເພື່ອຈຸດປະສົງຂອງການຍັບຍັ້ງ ຫຼື ແກ້ໄຂຄວາມຜິດພາດຂອງເດັກ. ອາຍຸ, ຂະໜາດ ແລະ ສະພາບຂອງເດັກ ແລະ ຈຸດທີ່ໄດ້ຮັບການບາດເຈັບຈາກການລົງໂທດ ຈະຕ້ອງຖືກພິຈາລະນາ ໃນການຕັດສິນໃຈວ່າ ການທຳຮ້າຍຮ່າງກາຍນັ້ນສົມເຫດສົມຜົນ ຫຼື ບໍ່ໜັກໜ່ວງຫຼາຍ. ປັດໄຈອື່ນໆ ອາດລວມເຖິງລະດັບການພັດທະນາການຂອງເດັກ ແລະ ລັກສະນະຂອງການກະທຳຜິດຂອງເດັກ. ພໍ່ແມ່ເຊື່ອວ່າ ມີຄວາມຈຳເປັນທີ່ຈະລົງໂທດເດັກທີ່ບໍ່ມີເຫດຜົນ ຫຼື ອະນຸຍາດໃຫ້ໃຊ້ກຳລັງຫຼາຍເກີນໄປ, ເກີນຂອບເຂດ ຫຼື ບໍ່ມີເຫດຜົນຕໍ່ກັບເດັກ. ທຸກການໃຊ້ກຳລັງຕໍ່ເດັກນ້ອຍໂດຍບຸກຄົນອື່ນແມ່ນຜິດກົດໝາຍ ເວັ້ນເສຍແຕ່ວ່າສົມເຫດສົມຜົນ ແລະ ບໍ່ໜັກໜ່ວງຫຼາຍ ແລະ ໄດ້ຮັບການອະນຸຍາດລ່ວງໜ້າ ຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ ເພື່ອຈຸດປະສົງການຍັບຍັ້ງ ຫຼື ແກ້ໄຂຄວາມຜິດພາດຂອງເດັກ.

- RCW 9A.16.100: **https://apps.leg.wa.gov/RCW/default.aspx?cite=9A.16.100**
- WAC 110-30-0030: **https://apps.leg.wa.gov/RCW/default.aspx?cite=9A.16.100**

## ອັນໃດທີ່ເປັນການໃຊ້ກຳລັງຕໍ່ຮ່າງກາຍເກີນຂອບເຂດ ຫຼື ບໍ່ສົມເຫດສົມຜົນ ແລະ ຖືວ່າເປັນການທາລຸນທາງຮ່າງກາຍ?

ການທາລຸນທາງຮ່າງກາຍ ໝາຍເຖິງ ການລົງໂທດທີ່ເຮັດໃຫ້ເກີດການບາດເຈັບທາງຮ່າງກາຍ ຫຼື ການທາລຸນທາງຮ່າງກາຍຕໍ່ເດັກໂດຍເຈດຕະນາ ທີ່ເປັນອັນຕະລາຍຕໍ່ສຸຂະພາບ, ສະຫວັດດີການ ຫຼື ຄວາມປອດໄພຂອງເດັກ. ເຊິ່ງອາດຈະລວມທັງ ແຕ່ບໍ່ຈຳກັດພຽງແຕ່ການກະທຳຕ່າງໆ ເຊັ່ນ:

(a) ການໂຍນ, ການເຕະ, ການຈູດ ຫຼື ການໃຊ້ຂອງມີຄົມກົດເດັກນ້ອຍ;
(b) ການຕີເດັກດ້ວຍກຳປັ້ນ;
(c) ການສະບັດເດັກນ້ອຍທີ່ອາຍຸຕໍ່າກວ່າສາມປີ;
(d) ການຂັດຂວາງລະບົບຫາຍໃຈຂອງເດັກ;
(e) ການຂົ່ມຂູ່ເດັກນ້ອຍດ້ວຍອາວຸດປືດຊີບ ຫຼື
(f) ການກະທຳອື່ນໆທີ່ມີຄວາມເປັນໄປໄດ້ທີ່ຈະກໍ່ໃຫ້ເກີດ ແລະ ທີ່ກໍ່ໃຫ້ເກີດອັນຕະລາຍຕໍ່ຮ່າງກາຍຫຼາຍກວ່າຄວາມເຈັບປວດຊົ່ວຄາວ ຫຼື ຮອຍເຈັບເລັກນ້ອຍຊົ່ວຄາວ ຫຼື ທີ່ເປັນອັນຕະລາຍຕໍ່ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ.

- RCW 9A.16.100: **https://apps.leg.wa.gov/RCW/default.aspx?cite=9A.16.100**
- WAC 110-30-0030: **https://apps.leg.wa.gov/WAC/default.aspx?cite=110-30-0030**

## ອັນໃດທີ່ຖືວ່າເປັນການລ່ວງລະເມີດທາງເພດ?

ການລ່ວງລະເມີດທາງເພດ ໝາຍເຖິງການກະທຳ ຫຼື ການອະນຸຍາດໃຫ້ມີການກະທຳຜິດທາງເພດໃດໜຶ່ງຕໍ່ເດັກນ້ອຍ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ. ການສຳຜັດໂດຍເຈດຕະນາ, ບໍ່ວ່າຈະໂດຍກົງ ຫຼື ຜ່ານເຄື່ອງນຸ່ງ ຕໍ່ສ່ວນອະໄວຍະວະເພດ ຫຼື ສ່ວນທີ່ໃກ້ຊິດອື່ນໆຂອງເດັກ ຫຼື ການອະນຸຍາດ, ບັງຄັບ, ຊຸກຍູ້, ຊ່ວຍເຫຼືອ ຫຼື ການກະທຳເປັນຢ່າງອື່ນທີ່ເຮັດໃຫ້ເດັກຖືກສຳຜັດສ່ວນອະໄວຍະວະເພດ ຫຼື ສ່ວນທີ່ໃກ້ຊິດອື່ນໆ ເພື່ອຈຸດປະສົງໃນການເຮັດໃຫ້ບຸກຄົນທີ່ສຳຜັດກັບເດັກ, ເດັກ ຫຼື ບຸກຄົນທີສາມມີຄວາມຕ້ອງການທາງເພດ. ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ, ບຸກຄົນທີ່ໄດ້ຮັບອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງທີ່ໃຫ້ການດູແລແກ່ເດັກ ຫຼື ບຸກຄົນທີ່ໃຫ້ການບໍລິການທີ່ໄດ້ຮັບການຍອມຮັບທາງການແພດແກ່ເດັກ, ອາດຈະສຳຜັດກັບອະໄວຍະວະເພດ ຫຼື ສ່ວນທີ່ໃກ້ຊິດອື່ນໆ ເພື່ອຈຸດປະສົງໃນການໃຫ້ການທຳຄວາມສະອາດ, ການດູແລເດັກ ແລະ ການປິ່ນປົວທາງການແພດ ຫຼື ການບົ່ງມະຕິພະຍາດ.

WAC 110-30-0030: **https://apps.leg.wa.gov/WAC/default.aspx?cite=110-30-0030**

Washington State Department of
CHILDREN, YOUTH & FAMILIES



## ການສະແຫວງຫາຜົນປະທາງເພດແມ່ນຫຍັງ?

ການສະແຫວງຫາຜົນປະໂຫຍດທາງເພດລວມທັງ ແຕ່ບໍ່ຈຳກັດພຽງແຕ່ ການຄ້າປະເວນີ ແລະ ການສະແຫວງຫາຜົນປະໂຫຍດທາງເພດເພື່ອການຄ້າ ຕາມຂໍ້ກຳນົດຕ່າງໆທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລວມທັງການກະທຳຕ່າງໆ ເຊັ່ນ: ການອະນຸຍາດ, ການບັງຄັບ, ການຊຸກຍູ້, ການຊ່ວຍເຫຼືອ ຫຼື ການກະທຳອື່ນໆ ທີ່ເຮັດໃຫ້ເດັກເຂົ້າຮ່ວມໃນການກະທຳໃດໜຶ່ງຕໍ່ໄປນີ້:

(a) ທຸກການກະທຳທາງເພດ ເມື່ອມີການໃຫ້ ຫຼື ໄດ້ຮັບຂອງມີຄ່າຈາກບຸກຄົນໃດໜຶ່ງ ເພື່ອການກະທຳທາງເພດ;

(b) ການສະແດງທາງເພດ, ລາມົກອານາຈານ ຫຼື ຮູບພາບລາມົກອານາຈານທີ່ຈະມີການຖ່າຍຮູບ, ຖ່າຍວິດີໂອ ຫຼື ຜະລິດຊ້ຳ ຫຼື ສື່ງຜ່ານທາງເອເລັກໂຕນິກ;

(c) ການສະແດງທາງເພດ, ລາມົກອານາຈານ ຫຼື ຮູບພາບລາມົກອານາຈານເພື່ອເປັນສ່ວນໜຶ່ງຂອງການສະແດງສົດ ຫຼື ເພື່ອຜົນປະໂຫຍດ ຫຼື ຄວາມພໍໃຈທາງເພດຂອງຄົນອື່ນ.

WAC 110-30-0030: **https://apps.leg.wa.gov/WAC/default.aspx?cite=110-30-0030**

## ຂ້າພະເຈົ້າສາມາດປ່ອຍໃຫ້ລູກຂອງຕົນຢູ່ຕາມລຳພັງກັບຜູ້ກະທຳຜິດທາງເພດ, ພຽງແຕ່ໃນໄລຍະເວລາສັ້ນໆໄດ້ບໍ?

ບໍ່ໄດ້, ການປ່ອຍໃຫ້ເດັກຢູ່ພາຍໃຕ້ການດູແລຂອງຜູ້ກະທຳຜິດທາງເພດ ເປັນການກະທຳຜິດທາງອາຍາ ເວັ້ນເສຍແຕ່ວ່າ ສານໄດ້ອອກຄຳສັ່ງອະນຸຍາດໃຫ້ຜູ້ກະທຳຜິດຕິດຕໍ່ພົວພັນກັບເດັກໄດ້ໂດຍບໍ່ມີການຄວບຄຸມດູແລ ຫຼື ຜູ້ກະທຳຜິດໄດ້ຮັບອະນຸຍາດໃຫ້ມີການຕິດຕໍ່ພົວພັນກັບເດັກທີ່ມີບັນຫາໂດຍບໍ່ມີການຄວບຄຸມດູແລພາຍໃຕ້ແຜນການຢູ່ຮ່ວມກັນຄືນໃໝ່ຂອງຄອບຄົວ ເຊິ່ງໄດ້ຮັບການອະນຸມັດຈາກສານ, ພະແນກດັດສ້າງ ຫຼື ພະແນກບໍລິການສັງຄົມ ແລະ ສຸຂະພາບ ຕາມນະໂຍບາຍຂອງພະແນກ.

ບຸກຄົນໃດໜຶ່ງ ຈະມີຄວາມຜິດທາງອາຍາ ໃນການປ່ອຍໃຫ້ເດັກຢູ່ພາຍໃຕ້ການດູແລຂອງຜູ້ກະທຳຜິດທາງເພດ ຖ້າວ່າບຸກຄົນດັ່ງກ່າວເປັນ (a) ພໍ່ແມ່ຂອງເດັກ; (b) ໄດ້ຮັບການມອບໝາຍໃຫ້ເບິ່ງແຍງທາງດ້ານຮ່າງກາຍຂອງເດັກ ຫຼື (c) ໄດ້ຮັບການວ່າຈ້າງໃນການສະໜອງສິ່ງຄວາມຈຳເປັນພື້ນຖານໃນຊີວິດແກ່ເດັກ ແລະ ປ່ອຍໃຫ້ເດັກຢູ່ພາຍໃຕ້ການເບິ່ງແຍງ ຫຼື ການດູແລຂອງບຸກຄົນອື່ນທີ່ບໍ່ແມ່ນພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ດູແລເດັກທີ່ຖືກຕ້ອງຕາມກົດໝາຍຂອງເດັກ, ໂດຍຮູ້ວ່າບຸກຄົນນັ້ນຖືກຂຶ້ນບັນຊີ ຫຼື ຕ້ອງຂຶ້ນບັນຊີເປັນຜູ້ກະທຳຜິດທາງເພດພາຍໃຕ້ກົດໝາຍຂອງລັດນີ້ ຫຼື ກົດໝາຍ ຫຼື ຄຳສັ່ງຢູ່ໃນຂອບເຂດສິດອຳນາດສານອື່ນ ທີ່ມີຂໍ້ກຳນົດຄ້າຍຄືກັນ, ເນື່ອງຈາກມີການກະທຳຜິດທາງເພດຕໍ່ກັບເດັກນ້ອຍ.

RCW 9A.42.110: **https://apps.leg.wa.gov/RCW/default.aspx?cite=9A.42.110**

## ການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນແມ່ນຫຍັງ?

ການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນ ໝາຍເຖິງການກະທຳ ຫຼື ບໍ່ກະທຳ ຫຼື ຜົນກະທົບສະສົມຂອງຮູບແບບໃນການປະພຶດ, ພຶດຕິກຳ ຫຼື ການບໍ່ກະທຳ ໜ້າທີ່ຂອງພໍ່ແມ່, ຜູ້ຄຸ້ມຄອງດູແລຕາມກົດໝາຍ, ຜູ້ປົກຄອງ ຫຼື ຜູ້ເບິ່ງແຍງດູແລຂອງເດັກ ທີ່ສະແດງໃຫ້ເຫັນເຖິງການບໍ່ເອົາໃຈໃສ່ຕໍ່ກັບຜົນສະທ້ອນທີ່ຮ້າຍແຮງຕໍ່ເດັກ ແລະ ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ.

(a) ເມື່ອພິຈາລະນາວ່າມີອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນ, ຫຼັກຖານກ່ຽວກັບການໃຊ້ສານເສບຕິດຂອງພໍ່ແມ່ ເປັນປັດໄຈສະໜັບສະໜູນທີ່ມີນ້ຳໜັກຫຼາຍ.

(b) ເຫດການທີ່ວ່າອ້າຍເອື້ອຍນ້ອງຮ່ວມຫ້ອງນອນດຽວກັນ ຈະບໍ່ແມ່ນການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນ ແຕ່ຢ່າງໃດ.

(c) ຄວາມທຸກຍາກ, ການບໍ່ມີທີ່ຢູ່ອາໄສ ຫຼື ການປະເຊີນກັບຄວາມຮຸນແຮງໃນຄອບຄົວທີ່ສືບເນື່ອງຕໍ່ບຸກຄົນອື່ນທີ່ບໍ່ແມ່ນເດັກນັ້ນ ບໍ່ຖືວ່າເປັນການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນ.

(d) ເດັກນ້ອຍບໍ່ຈຳເປັນຕ້ອງໄດ້ຮັບຄວາມເສຍຫາຍຕົວຈິງ ຫຼື ການທຳຮ້າຍຮ່າງກາຍ ຫຼື ຈິດໃຈ ເມື່ອຢູ່ໃນສະຖານະການທີ່ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ.

(e) ການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນ ອາດລວມທັງ ແຕ່ບໍ່ຈຳກັດພຽງແຕ່ສິ່ງໃດໜຶ່ງຕໍ່ໄປນີ້:

   (i) ການບໍ່ສະໜອງ ອາຫານ, ທີ່ພັກອາໄສ, ເຄື່ອງນຸ່ງຫົ່ມ, ການຄວບຄຸມດູແລ ຫຼື ການດູແລສຸຂະພາບທີ່ຈຳເປັນຕໍ່ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ ເຊິ່ງການບໍ່ສະໜອງດັ່ງກ່າວ ສະແດງໃຫ້ເຫັນເຖິງການບໍ່ເອົາໃຈໃສ່ຕໍ່ຜົນສະທ້ອນທີ່ຮ້າຍແຮງຕໍ່ກັບເດັກ ແລະ ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບເດັກ, ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ;

   (ii) ການກະທຳ, ການບໍ່ກະທຳ ຫຼື ການລະເລີຍທີ່ສົ່ງຜົນໃຫ້ເກີດການບາດເຈັບ ຫຼື ສ່ຽງຕໍ່ການບາດເຈັບຕໍ່ກັບການພັດທະນາການທາງດ້ານຮ່າງກາຍ, ຄວາມຮູ້ສຶກ ແລະ/ຫຼື ການຮັບຮູ້ຂອງເດັກ, ເຊິ່ງສະແດງໃຫ້ເຫັນເຖິງການບໍ່ເອົາໃຈໃສ່ຕໍ່ຜົນສະທ້ອນທີ່ຮ້າຍແຮງຕໍ່ກັບເດັກ ແລະ ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບເດັກ, ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ;

   (iii) ຜົນກະທົບສະສົມຂອງຮູບແບບໃນການປະພຶດ, ພຶດຕິກຳ ຫຼື ການບໍ່ກະທຳຂອງພໍ່ແມ່ ຫຼື ຜູ້ປົກຄອງ ໃນການສະໜອງສິ່ງທີ່ຈຳເປັນຕໍ່ຮ່າງກາຍ, ຄວາມຮູ້ສຶກ ຫຼື ການພັດທະນາການຂອງເດັກ, ເຊິ່ງສະແດງໃຫ້ເຫັນເຖິງການບໍ່ເອົາໃຈໃສ່ຕໍ່ຜົນສະທ້ອນທີ່ຮ້າຍແຮງຕໍ່ກັບເດັກ ແລະ ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບເດັກ, ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ;

(iv) ຜົນກະທົບຂອງການບໍ່ກະທຳໜ້າທີ່ຂອງພໍ່ແມ່ ຫຼື ຜູ້ປົກຄອງແບບຊຳເຮື້ອ ໃນການປະຕິບັດໜ້າທີ່ພື້ນຖານຂອງພໍ່ແມ່, ພັນທະ ຫຼື ໜ້າທີ່ຕ່າງໆ ທີ່ເຮັດໃຫ້ເກີດການບາດເຈັບ ຫຼື ມີຄວາມສ່ຽງຫຼາຍຕໍ່ການບາດເຈັບ ຕໍ່ກັບການພັດທະນາການທາງດ້ານຮ່າງກາຍ, ຈິດໃຈ ຫຼື ຄວາມຮັບຮູ້ຂອງເດັກ ເຊິ່ງສະແດງໃຫ້ເຫັນເຖິງການບໍ່ເອົາໃຈໃສ່ຕໍ່ຜົນສະທ້ອນທີ່ຮ້າຍແຮງຕໍ່ກັບເດັກ ແລະ ສ້າງອັນຕະລາຍທີ່ຊັດເຈນ ແລະ ເກີດຂຶ້ນຕໍ່ກັບເດັກ, ສຸຂະພາບ, ສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກ,

WAC 110-30-0030: **https://apps.leg.wa.gov/WAC/default.aspx?cite=110-30-0030**